# ບົດທີ 24

# ພະເຢຊູເທດສະໜາເລື່ອງພະວິນຍານ ແລະພະທຳ ໃນນາຊາເລັດ

ບາດນີ້ມາເຖິງຕອນສຸດທ້າຍໃນປີທີ່ພະອົງຕຽມຕົວ ປີນັ້ນຕັ້ງຕົ້ນດ້ວຍ ພະເຢຊູຊົງຮັບອຳນາດຈາກພະວິນຍານ ແລະ ພະທຳ. ໃນຕອນສຸດທ້າຍ ພະເຢຊູອາໄສອຳນາດຂອງພະວິນຍານ ແລະພະທຳເຊັ່ນດຽວກັນ. ເຫດການນີ້ປາກົດ ມາໃນຂ່າວປະເສີດ ລູກາ.

## ສະໄໝປີຕຽມຕົວ

<table>
<tr><th colspan="2">ເຫດການ</th><th>ຂ່າວປະເສີດ</th><th>ບົດແລະຂໍ້</th></tr>
<tr><td>1</td><td></td><td rowspan="3">ມັດທາຍ</td><td>3:1-12</td></tr>
<tr><td>2</td><td></td><td>3:13-17</td></tr>
<tr><td>3</td><td></td><td>4:1-11</td></tr>
<tr><td>4</td><td></td><td rowspan="6">ໂຢຮັນ</td><td>1:35-51</td></tr>
<tr><td>5</td><td></td><td>2:1-12</td></tr>
<tr><td>6</td><td></td><td>2:13-22</td></tr>
<tr><td>7</td><td></td><td>3:1-15</td></tr>
<tr><td>8</td><td></td><td>4:1-42</td></tr>
<tr><td>9</td><td></td><td>4:43-54</td></tr>
<tr><td>10</td><td></td><td>ລູກາ</td><td>4:16-31</td></tr>
</table>

**1** *ໄຊໂຍ!* ທ່ານໄດ້ຮຽນມາເຖິງເຫດການສຸດທ້າຍ ໃນສະໄໝປີທີ່ພະເຢຊູຕຽມຕົວປ່າວປະກາດ. ແຕ່ກ່ອນ ຈະຮຽນຕໍ່ໄປ ໃຫ້ເຮົາກັບໄປເບິ່ງເຫດການສຳຄັນໃນປີນັ້ນ. ມັດທາຍໄດ້ບັນທຶກເລື່ອງເຫດການ 3 ປະການໃນປີທີ່ ຕຽມຕົວ. ໃຫ້ທ່ານຂຽນລາຍຊື່ 3 ປະການພ້ອມກັບບົດແລະຂໍ້ໃນພະຄຳພີ (ເປີດພະຄຳພີກໍໄດ້)

ກ. ________________________________ ມທ __________ ເຖິງ ___

ຂ. ________________________________ ມທ __________ ເຖິງ ___

ຄ. ________________________________ ມທ __________ ເຖິງ ___

| |
|---|
| ຝຶກ: ໃຫ້ທ່ານເບິ່ງໜ້າປົກບົດນີ້ ແລ້ວຕື່ມຄວາມໃສ່ຕາຕະລາງໃຫ້ຖືກຕ້ອງ ໃສ່ໃນຫ້ອງທີ 1, 2, 3 |

**2** ເຫດການຈາກຂ່າວປະເສີດມັດທາຍ ຂຶ້ນກັບສະໄໝປີທີ່ຕຽມຕົວຢູ່ໃນບົດໃດແດ່? ______

**3** ນອກຈາກເຫດການ 3 ປະການ ໃນມັດທາຍແລ້ວ ຂ່າວປະເສີດໂຢຮັນ ຍັງບັນທຶກເລື່ອງເຫດການອີກ 6 ປະການໃນ ສະໄໝປີທີ່ພະອົງຕຽມຕົວ. ເຫດການ 6 ປະການນັ້ນ ຢູ່ໃນໂຢຮັນ ບົດໃດແດ່? (ເປີດເບິ່ງໃນພະຄຳພີທີ່ທ່ານເອົາ ສໍສີຂຽວຂີດກ້ອງໄວ້ກໍໄດ້) ______________

**4** ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້: ໃນຕົ້ນປີທີ່ພະເຢຊູຈະຕຽມຕົວ ພະອົງອອກຈາກ...

ກ. ອາຊີບ ______________________________________________

ຂ. ໃນເມືອງ ____________________________________________

ຄ. ແຂວງ ______________________________________________

ງ. ເດີນທາງໄປໃຕ້ເຖິງແມ່ນ້ຳ ________________________________

ຈ. ເພື່ອຮ່ວມກັບ _________________________________________

ສ. ໃນແຂວງ ______________________ ແລະ ______________________

**5** ເຫດການທັງສາມປະການຈາກຂ່າວປະເສີດມັດທາຍ ເກີດຂຶ້ນໃນສອງແຂວງໃດ?

______________________________ ແລະ ________________________

ຕອບ:

**1** *ກ. ໂຢຮັນບັບຕິສະໂຕເທດສະໜາ ມທ 3:1-12*

*ຂ. ພະເຢຊູຮັບບັບຕິສະມາ ມທ 3:13-17*

*ຄ. ມານທົດລອງພະເຢຊູ ມທ 4:1-11*

**2** *ໃນບົດ 3 ແລະ ບົດ 4*

**3** *ໂຢຮັນ ບົດ 1 ເຖິງ ບົດ 4*

**4** *ກ. ຊ່າງໄມ້ ຂ. ນາຊາເລັດ ຄ. ຄາລີເລ ງ. ຢໍດາເນ*

*ຈ. ໂຢຮັນບັບຕິສະໂຕ ສ. ຢູດາຍ ແລະ ເປີເລຍ*

**5** *ຢູດາຍ ແລະ ເປີເລຍ*

**6** ໃນເຫດການ 6 ປະການ ທີ່ໂຢຮັນລາຍງານນັ້ນຄື:

1. ເກີດຂຶ້ນໃນແຂວງຊາມາເລຍ
2. ເກີດຂຶ້ນໃນບ້ານການາ ແຂວງຄາລີເລ
3. ເກີດຂຶ້ນໃນແຂວງຢູດາຍ ໃຫ້ທ່ານຂຽນຊື່ແຂວງທີ່ມີເຫດການເຫຼົ່ານີ້ເກີດຂຶ້ນ

ກ. ______________________ ສາວົກໝວດທຳອິດ

ຂ. ______________________ ງານສົມລົດທີ່ບ້ານການາ

ຄ. ______________________ ຊົງຊຳຣະພະວິຫານ

ງ. ______________________ ນີໂກເດມມາຫາພະເຢຊູ

ຈ. ______________________ ພະເຢຊູກັບຍິງຊາວຊາມາເລຍ

ສ. ______________________ ພະເຢຊູຊົງໂຜດລູກຊາຍເຈົ້ານາຍຜູ້ໜຶ່ງໃຫ້ດີ

| |
|---|
| ຝຶກ: ໃຫ້ທ່ານເປີດເບິ່ງຕາຕະລາງໃນໜ້າປົກບົດນີ້ອີກ ແລ້ວຕື່ມຄວາມ ໃສ່ໃນຫ້ອງທີ 4-9 ຕາມລຳດັບ. ເປີດພະຄຳພີກໍໄດ້ |

**7** ທັງຂ່າວປະເສີດໂຢຮັນ ແລະຂ່າວປະເສີດ 3 ເຫຼັ້ມແລກລາຍງານວ່າ ໃນປີທີ່ຕຽມຕົວນີ້ ພະເຢຊູຢູ່ໃນພາກໃຕ້ຫຼາຍກວ່າ ພາກເໜືອ, ພະອົງໄປແຂວງຢູດາຍ ແລະແຂວງເປີເລຍເພື່ອປະກາດຮ່ວມກັບໂຢຮັນບັບຕິສະໂຕ. ໃນ 5 ພະຄຳພີ ຕໍ່ໄປນີ້ ໃຫ້ທ່ານໝາຍ √ ອັນໃດທີ່ອ້າງເຖິງພະເຢຊູ ຢູ່ກັບໂຢຮັນບັບຕິສະໂຕໃນສອງແຂວງພາກໃຕ້.

_____ ໂຢຮັນ 2:1 _____ ໂຢຮັນ 1:28-29

_____ ໂຢຮັນ 4:1-3 _____ ໂຢຮັນ 3:22-23

_____ ໂຢຮັນ 4:46

**8** ເຖິງວ່າ ພະເຢຊູເດີນທາງໄປແຂວງຢູດາຍ ແລະແຂວງຊາມາເລຍ ຫຼາຍກໍຕາມ.

ກ. ແຕ່ບ້ານພັກຂອງພະອົງຍັງຢູ່ໃສ? ______________________

ຂ. ໃນແຂວງໃດ? ______________________

ຄ. ພະເຢຊູຢູ່ໃນບ້ານນັ້ນເກືອບ 30 ປີ ແຕ່ພະອົງຍ້າຍອອກທ້າຍສະໄໝປີໃດ? ________

ງ. ຍ້າຍໄປຢູ່ໃສ? ______________________

ຈ. ໃນຕົ້ນສະໄໝປີໃດ? ______________________

ຕອບ:

**6** *ກ. ຢູດາຍ ຂ. ຄາລີເລ ຄ. ຢູດາຍ ງ. ຢູດາຍ ຈ. ຊາມາເລຍ ສ. ຄາລີເລ*

**7** *ຢຮ 1:28-29 ຢຮ 3:22-23 ຢຮ 4:1-3*

**8** *ກ. ນາຊາເລັດ ຂ. ຄາລີເລ ຄ. ຕຽມຕົວ ງ. ກາເປນາອູມ*
*ຈ. ປີທີ່ມີຊື່ສຽງດີ*

**9** ການທີ່ພະອົງຍ້າຍໄປເມືອງກາເປນາອຸມ ເປັນຂໍ້ຕໍ່ທີສາມ. ໃຫ້ທ່ານຊອກຫາຂໍ້ຕໍ່ທີສາມໃນພະຄຳພີທີ່ໝາຍໄວ້ເມື່ອ ຮຽນຈາກ ມັດທາຍ ເຫຼັ້ມທີ 1 ໃນຫຼັກສູດນີ້. ຂໍ້ຕໍ່ທີສາມຢູ່ໃນຂ່າວປະເສີດມັດທາຍ ບົດໃດ ຂໍ້ໃດ? ____________________________________________

*ລູກາ ເປັນຜູ້ລາຍງານຢ່າງລະອຽດ ກ່ຽວກັບເຫດການທີ່ພະເຢຊູຍ້າຍອອກຈາກນາຊາເລັດໄປກາເປນາອຸມ. ເຫດການນັ້ນສະແດງການຈົບລົງໃນສະໄໝປີທີ່ຕຽມຕົວແລະການເລີ້ມຕົ້ນໃນສະໄໝປີທີ່ມີຊື່ສຽງດີຂອງພະອົງ. ໃຫ້ອ່ານ ລູກາ 4:16 ກ່ອນ.*

**10** ບົດສຸດທ້າຍໃນເຫຼັ້ມກ່ອນ (ຄືມັດທາຍ ເຫຼັ້ມທີ I) ເວົ້າເຖິງເມືອງນາຊາເລັດ ແລະການນະມັດສະການພະເຈົ້າໃນ ຄອບຄົວຂອງໂຢເຊັບ ແລະນາງມາລີອາ.

ກ. ຄອບຄົວນັ້ນນະມັດສະການພະເຈົ້າ ໃນວັນໃດ? ____________________________

ຂ. ບ່ອນນະມັດສະການໃນເມືອງນາຊາເລັດ ຮ້ອງວ່າຢ່າງໃດ? ____________________

ຄ. ການປະຊຸມນະມັດສະການຂອງເຂົາປະກອບດ້ວຍ ເພງສັນລະເສີນ ແລະຄຳສອນຈາກພະຄຳພີເດີມ. ເວລານັ້ນ ພະຄຳພີເດີມຂຽນໃນເຈັ້ຍແບບໃດ? ____________________

**11** ຄຳເທດສະໜາຂອງພະເຢຊູ ໃນ ລູກາ 4:16-30 ເປັນຄຳເທດສະໜາທຳອິດທີ່ເຮົາເຫັນໃນຂ່າວປະເສີດທັງ 4 ເຫຼັ້ມນັ້ນ. ພະອົງກ່າວຄຳເທດສະໜານັ້ນຢູ່ໃສ? ________________

*ບາດນີ້ເຮົາຈະໃຊ້ວິທີສັງເກດ, ໃຫ້ທ່ານອ່ານ ລູກາ 4:17-19 ດີໆ ເພື່ອໃຫ້ທ່ານຈື່ຈຸດສຳຄັນ ທ່ານອາດຈະຂຽນໃສ່ເຈັ້ຍເສດໄວ້ກໍໄດ້.*

**12** ຄຳເທດສະໜານີ້ ເປັນເຫດການສຸດທ້າຍໃນສະໄໝປີທີ່ພະເຢຊູຕຽມຕົວກ່ອນຈະເລີ້ມຕົ້ນສະໄໝທີ່ພະອົງຊື່ສຽງດີ. ອີກເທື່ອໜຶ່ງ ພະເຢຊູຈະໃຊ້ເຄື່ອງອາວຸດທີ່ພະອົງໄດ້ຮັບໃນເວລາຮັບບັບຕິສະມາ, ເຄື່ອງອາວຸດສອງຢ່າງນັ້ນຄື: ພະທຳຂອງພະເຈົ້າ ແລະພະວິນຍານຂອງພະເຈົ້າ.

ກ. ພະເຢຊູໃຊ້ເຄື່ອງອາວຸດໃດ ໃນ ຂໍ້ 17? ________________________________

ຂ. ພະເຢຊູອ້າງເຖິງເຄື່ອງອາວຸດໃດ ໃນຕົ້ນຂໍ້ 18? ____________________________

**13** ພະເຢຊູໃຊ້ເຄື່ອງອາວຸດ 2 ປະການໃດ ກ່ອນຈະເລີ້ມຕົ້ນປ່າວປະກາດໃນສະໄໝປີທີ່ຊື່ສຽງດີ. ປາກົດມາໃນຄຳເທດ ສະໜາຢູ່ນາຊາເລັດ? ________________________________

ຕອບ:

**9** *ມທ 4:12-13*

**10** *ກ. ວັນຊະບາໂຕ (ວັນເສົາ) ຂ. ໂຮງທຳ ຄ. ເປັນແບບມ້ວນ*

**11** *ໃນໂຮງທຳຢູ່ນາຊາເລັດ*

**12** *ກ. ພະທຳຂອງພະເຈາ ຂ. ພະວິນຍານຂອງພະເຈາ*

**13** *ພະທຳຂອງພະເຈາ ວິນຍານຂອງພະເຈາ*

**14** ພວກຄົນຢິວໃນສະໄໝພະເຢຊູບໍ່ທັນມີພະຄຳພີໃໝ່ເທື່ອ ມີແຕ່ພະຄຳພີເດີມ. ໃນໂຮງທຳຢູ່ ນາຊາເລັດ ພະເຢຊູ ເທດສະໜາຈາກພະທຳໃດ ໃນພະຄຳພີເດີມ? ________________

**15** ກ. ໃຫ້ທ່ານເບິ່ງຂໍ້ອ້າງຢູ່ລຸ່ມໜ້າ 181 ໃນພະຄຳພີໃໝ່ ພະເຢຊູຍົກເທດສະໜາຈາກບົດໃດ ຂໍ້ໃດໃນພະຄຳພີເດີມ? ________________

ຂ. ພະເຢຊູຊິງກ່າວອ້າງຈາກ ເອຊາຢາ ໃນຂ່າວປະເສີດ ລູກາ ບົດແລະຂໍ້ໃດ? __________

**16** ໃນຄວາມທຳນວາຍນີ້ບໍ່ແມ່ນວ່າ ພະເມຊີອາຈະຖືກທົດສິງດ້ວຍນ້ຳມັນຢ່າງພວກກະສັດຢິວແຕ່ ຈະຖືກທົດສິງໂດຍຫຍັງ (ລູກາ 4:18) ________________

**17** ກ. ຄຳວ່າ "ພະຄຣິດ" ແປວ່າຫຍັງ? ________________

ຂ. ຄຳວ່າ "ພະເມຊີອາ" ແປວ່າຫຍັງ? ________________

**18** ພະຄຳພີມີສອງຄວາມທີ່ໝາຍວ່າ "ຜູ້ທີ່ຮັບການທົດສິງ"

ກ. ພາສາກະລິກ ແມ່ນຄຳໃດ? ________________

ຂ. ພາສາເຮັບເລີ ແມ່ນຄຳໃດ? ________________

**19** ພະເຢຊູເປັນກະສັດເໜືອກະສັດທຸກອົງ ພະອົງຮັບການທົດສິງໂດຍພະວິນຍານບໍລິສຸດ ໃນໂອ ກາດໃດ? ________________

**20** ຄຳທຳນວາຍໃນ ເອຊາຢາ 61:1-2 ສຳເລັດໂດຍໃຜ? (ລກ 4:21) ________________

| |
|---|
| ຝຶກ: ຢ່າລືມເອົາສໍສີແດງຂີດກ້ອງຄວາມທຳນວາຍໃນ ອຊຢ 61:1-2<br>ແລ້ວຂຽນຄຳ "ສຳເລັດ" ໃສ່ຂອບໜ້າຂອງ ລູກາ 4:18-19 |

**21** ໃຫ້ທ່ານໃຊ້ພະຄຳພີທີ່ໝາຍໄວ້ ແລ້ວຕອບຄຳຖາມຕໍ່ໄປນີ້:

ກ. ຄຳທຳນວາຍທີ່ວ່າ ພະເຢຊູຈະຖືກທົດສິງໂດຍພະວິນຍານຂອງພະເຈົ້າ ເພື່ອມີອຳນາດປ່າວ ປະກາດນັ້ນ ມີຢູ່ໃສໃນ ພະຄຳພີເດີມ? ________________

ຂ. ຄວາມສຳເລັດຢູ່ໃນຂ່າວປະເສີດເຫຼັ້ມໃດ ບົດໃດ ຂໍ້ໃດ? ________________

ຕອບ:

**14** *ເອຊາຢາ*

**15** *ກ. ເອຊາຢາ 61:1-2 ຂ. ລູກາ 4:18-19*

**16** *ພະວິນຍານຂອງພະເຈົາ*

**17** *ກ. ຜູ້ທີ່ຮັບການທົດສິງ ຂ. ຜູ້ທີ່ຮັບການທົດສິງ*

**18** *ກ. ພະຄຣິດ ຂ. ພະເມຊີອາ*

**19** *ເມື່ອພະອົງຮັບບັບຕິສະມາ*

**20** *ໂດຍພະເຢຊູ*

**21** *ກ. ເອຊາຢາ 61:1-2 ຂ. ລູກາ 4:18-19*

**22** ກ. ພະເຢຊູເວົ້າຄວາມນັ້ນ ໃນ ລູກາ 4:22 ແລ້ວ ຄົນທັງປວງກໍກ່າວ ____________ ພະອົງ. (ຈົ່ງຕື່ມຄວາມ)

ຂ. ຖ້ອຍຄຳທີ່ອອກຈາກປາກພະອົງເປັນຢ່າງໃດ? ______________________________

**23** ພວກເຮົາສົມຄວນຈະປ່າວປະກາດຂ່າວປະເສີດຕາມແບບຢ່າງຂອງພະເຢຊູ. ພວກເຮົາມີເຄື່ອງອາວຸດຈາກພະເຈົ້າ ເຊັ່ນດຽວກັນ ໃນຄວາມທຳນວາຍຈາກພະທຳ ເອຊາຢາ ບົດ 61 ນີ້, ເຮົາເຫັນລັກສະນະຂອງຄຳເທດສະໜາໃຕ້ ອຳນາດຂອງພະວິນຍານບໍລິສຸດ 4 ປະການຄື: (ຈົ່ງຕື່ມຄວາມທີ່ຂາດ)

ກ. ປະກາດຂ່າວປະເສີດແກ່ ______________________________________________

ຂ. ປະກາດອິດສະຫລະພາບແກ່ __________________________________________

ຄ. ປະກາດແກ່ ______________________________ ວ່າຈະໄດ້ເຫັນຮຸ່ງອີກ.

ງ. ປ່ອຍ ______________________________ ເປັນອິດສະຫລະ.

**24** ການປົກຄອງຂອງພະເຈົ້າ ແລະການປົກຄອງຂອງຜູ້ມີອຳນາດໃນໂລກນີ້ແຕກຕ່າງກັນ ຄົນທີ່ຈະຊອກຫາອຳນາດໃນ ໂລກນີ້ ຢາກໄດ້ອິດທິພົນ, ເປັນຜູ້ມີຊື່ສຽງ, ເປັນຜູ້ຮັ່ງມີ, ແລະເປັນຜູ້ຈອງຫອງ. ແຕ່ລາຊະອານາຈັກຂອງພະເຈົ້າ ຕັ້ງ ໄວ້ເພື່ອໃຫ້ຜູ້ທີ່ຖ່ອມຕົວມີຄວາມຫວັງໃຈ. ເອຊາຢາເວົ້າເຖິງຄົນທີ່ພະເຢຊູຈະຊ່ວຍຄົນ 4 ແບບໃດແດ່?

ກ. ______________________________________________________________

ຂ. ______________________________________________________________

ຄ. ______________________________________________________________

ງ. ______________________________________________________________

**25** ທີ່ພະເຢຊູບອກວ່າ ຈະມາປະກາດຂ່າວດີແກ່ຄົນຍາກຈົນ ອ້າງເຖິງການຍາກຈົນດ້ານວັດຖຸສິ່ງຂອງຢ່າງດຽວ ຫລືອ້າງ ເຖິງຜູ້ຍາກຈົນດ້ານຈິດວິນຍານດ້ວຍ? ____________________

**26** ທີ່ພະເຢຊູບອກວ່າ ຈະໃຫ້ຄົນຕາບອດເຫັນຮຸ່ງອີກ ອ້າງເຖິງຄົນຕາບອດໃນຮ່າງກາຍຢ່າງດຽວ ຫລືທັງຄົນຕາບອດທາງ ຈິດວິນຍານດ້ວຍ? ________________________________

**27** ພວກສະເລີຍເດ ມີບາງຄົນທີ່ຖືກຂັງໄວ້ໃນຄຸກ ມີອີກພວກນຶ່ງທີ່ເປັນສະເລີຍຂອງຄວາມໃດ?

______________________________________________________________

ຕອບ:

**22** *ກ. ຊົມເຊີຍ* *ຂ. ອ່ອນຫວານ*

**23** *ກ. ຄົນຍາກຈົນ* *ຂ. ບັນດາຊະເລີຍ* *ຄ. ຄົນຕາບອດ* *ງ. ຜູ້ຖືກບີບບັງຄັບ*

**24** *ກ. ຄົນຍາກຈົນ* *ຂ. ບັນດາຊະເລີຍ* *ຄ. ຄົນຕາບອດ* *ງ. ຜູ້ຖືກບີບບັງຄັບ*

**25** *ຜູ້ທີ່ຍາກຈົນດ້ານຈິດວິນຍານດ້ວຍ*

**26** *ດ້ານຈິດວິນຍານ*

**27** *ຄວາມຜິດບາບ*

**28** ພະເຢຊູ ຈະມາຊ່ວຍຄົນດ້ານຈິດວິນຍານເປັນຕົ້ນ ແຕ່ພະເຢຊູ ຈະຊ່ວຍຄົນດ້ານຮ່າງກາຍດ້ວຍ. ການປະກາດຂອງ ພະເຢຊູເກີດມີຜົນດີ ເພາະພະອົງຊົງປະກາດພະທຳຂອງພະເຈົ້າດ້ວຍອຳນາດຂອງພະວິນຍານບໍລິສຸດ.

ກ. ໃນຕົ້ນປີທີ່ຕຽມຕົວ ພະວິນຍານລົງມາຫາພະອົງໃນຮູບໃດ? ____________________

ຂ. ໃນທ້າຍປີນັ້ນ ພະເຢຊູຊົງກ່າວອ້າງ ເລື່ອງພະວິນຍານ ຈາກເອຊາຢາ ບົດໃດ ຂໍ້ໃດ?

________________________________________________________________

ຄ. ໃນຕົ້ນປີນັ້ນ ພະເຢຊູຊົງກ່າວອ້າງ ຈາກພະຄຳພີໃນໂອກາດໃດ? ________________

ງ. ໃນທ້າຍປີດຽວກັນ ພະອົງອ່ານຈາກພະທຳເອຊາຢາບົດໃດ ຂໍ້ໃດ? _______________

*ໃຫ້ທ່ານອ້ອນວອນຂໍໃຫ້ ພະເຈົ້າຊ່ວຍໃຫ້ທ່ານເປັນຜູ້ປະກາດພະທຳ*
*ດ້ວຍອຳນາດພະວິນຍານບໍລິສຸດ.*

*ຈົ່ງເຮັດບົດເສັງເລີຍ*

ຕອບ:

**28** *ກ. ນົກເຂົາ* *ຂ. ອຊຢ 61:1-2* *ຄ. ເມື່ອຖືກທົດລອງ*
*ງ. ພະທຳ ອຊຢ 61:1-2*